ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

ກະຊວງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ

ເລກທີ 457 /ຖວທ
ນະຄອນຫຼວງວຽງຈັນ, ວັນທີ: 30/7/2020

# ຂໍ້ຕົກລົງ
# ວ່າດ້ວຍຂໍ້ກຳນົດ ແລະ ລະບຽບການຂອງບັດນັກຂ່າວ

- ອີງຕາມ ກົດໝາຍວ່າດ້ວຍສື່ມວນຊົນ (ສະບັບປັບປຸງ) ເລກທີ 01/ສພຊ ລົງວັນທີ 4 ພະຈິກ 2016 (ຢູ່ໃນໝວດ 2 ມາດຕາ 38).
- ອີງຕາມ ດຳລັດ ຂອງນາຍົກລັດຖະມົນຕີ ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງກະຊວງຖະແຫຼງຂ່າວ ວັດທະນະທຳ ແລະ ທ່ອງທ່ຽວ ເລກທີ 95/ນຍ ລົງວັນທີ 9 ມີນາ 2017.
- ເພື່ອຮັບປະກັນຄວາມເປັນເອກະພາບຕາມສິດ ແລະ ໜ້າທີ່ຂອງຜູ້ທີ່ໄດ້ຮັບບັດນັກຂ່າວໄດ້ເຄື່ອນໄຫວຢ່າງຖືກຕ້ອງ.

## ລັດຖະມົນຕີ ອອກຂໍ້ຕົກລົງ:

## ໝວດທີ 1
## ບົດບັນຍັດທົ່ວໄປ

### ມາດຕາ 1 ຈຸດປະສົງ

ຂໍ້ຕົກລົງສະບັບນີ້ກຳນົດຫຼັກການ, ລະບຽບການກ່ຽວກັບຂັ້ນຕອນການປະກອບຂໍສະເໜີເຮັດ, ປ່ຽນອອກຄືນໃໝ່ ແລະ ຖອນບັດນັກຂ່າວເພື່ອແນ່ໃສ່ສ້າງຄວາມເປັນເອກະພາບ ແລະ ຄວາມເປັນລະບຽບ ສຳລັບເປົ້າໝາຍຜູ້ຖືບັດໃນຂະແໜງສື່ມວນຊົນລາວ.

### ມາດຕາ 2 ບັດນັກຂ່າວ

ບັດນັກຂ່າວແມ່ນເອກະສານທີ່ຢັ້ງຢືນການເປັນນັກຂ່າວຊຶ່ງລັດຖະມົນຕີກະຊວງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ເປັນຜູ້ອະນຸມັດ ແລະ ມີອາຍຸນຳໃຊ້ໃນກຳນົດ 5 (ຫ້າ) ປີ.

### ມາດຕາ 3 ຂອບເຂດການນຳໃຊ້ຂໍ້ຕົກລົງ

ຂໍ້ຕົກລົງສະບັບນີ້ນຳໃຊ້ສຳລັບບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງທີ່ກ່ຽວຂ້ອງກັບການນຳໃຊ້ບັດນັກຂ່າວໃນດິນແດນ ຂອງ ສປປລາວ.

ມາດຕາ 4 ຫຼັກການນຳໃຊ້ບັດນັກຂ່າວ

ການນຳໃຊ້ບັດນັກຂ່າວຕ້ອງປະຕິບັດຕາມຫຼັກການດັ່ງນີ້:

1. ຮັບປະກັນໃຫ້ຜູ້ເປັນເປົ້າໝາຍຖືບັດນັກຂ່າວເຮັດໜ້າທີ່ຮັບໃຊ້ແນວທາງນະໂຍບາຍ ຂອງພັກ-ລັດ ແລະ ຮັບໃຊ້ຜົນປະໂຫຍດຂອງປະຊາຊົນບັນດາເຜົ່າ.

2. ຮັບປະກັນສິດການເຂົ້າເຖິງແຫຼ່ງຂ່າວ ແລະ ການປົກປ້ອງສິດໜ້າທີ່ຂອງນັກຂ່າວ.

3. ຮັບປະກັນການຄຸ້ມຄອງນັກຂ່າວຢ່າງລວມສູນ.

ມາດຕາ 5 ຜູ້ເປັນເປົ້າໝາຍຖືບັດນັກຂ່າວ.

ຜູ້ເປັນເປົ້າໝາຍຖືບັດນັກຂ່າວແມ່ນພະນັກງານ ທີ່ສັງກັດຢູ່ໃນອົງການສື່ມວນຊົນ, ສະມາຄົມນັກຂ່າວແຫ່ງ ສປປ ລາວ ແລະ ພະນັກງານຄຸ້ມຄອງວຽກງານສື່ມວນຊົນທຸກຂັ້ນ.

## ໝວດທີ 2
## ສິດຈາກການນຳໃຊ້ບັດນັກຂ່າວ

ມາດຕາ 6 ສິດເຂົ້າຫາແຫຼ່ງຂ່າວ

ນັກຂ່າວ ຜູ້ຖືບັດນັກຂ່າວທີ່ຖືກຕ້ອງ ມີສິດເຂົ້າຫາແຫຼ່ງຂ່າວທີ່ເປັນສຳນັກງານອົງການຂອງພັກລັດອົງການແນວລາວສ້າງຊາດ, ອົງການຈັດຕັ້ງມະຫາຊົນ, ອົງການຈັດຕັ້ງສັງຄົມ, ອົງການຈັດຕັ້ງສາກົນທີ່ຕັ້ງໃນດິນແດນ ສປປ ລາວ, ທຸກຂົງເຂດການພັດທະນາເສດຖະກິດ - ວັດທະນະທຳສັງຄົມ ຂອງ ສປປລາວ, ສະຖານທີ່ບັນເທີງຕ່າງໆ, ຍົກເວັ້ນເຂດທີ່ມີແຈ້ງການຫວງຫ້າມ.

ມາດຕາ 7 ສິດໄດ້ຮັບນະໂຍບາຍ

ນັກຂ່າວຜູ້ຖືບັດນັກຂ່າວທີ່ຖືກຕ້ອງ ມີສິດຜ່ານເຂົ້າສະຖານທີ່ສາທາລະນະທີ່ຕ້ອງເສຍຄ່າ ຜ່ານເຂົ້າ ໂດຍບໍ່ເສຍຄ່າຜ່ານເຂົ້າໄດ້ແກ່: ທາງດ່ວນ, ຂົວ, ປະຕູເຂົ້າຊົມແຫຼ່ງທອ່ງທ່ຽວ ແລະ ແຫຼ່ງວັດທະນະທຳຕ່າງໆ ແຕ່ການເຄື່ອນໄຫວຂອງນັກຂ່າວ ຕ້ອງມີໃບແຕ່ງຕັ້ງຈາກຫົວໜ້າອົງການເຈົ້າຂອງສື່ມວນຊົນທີ່ຕົນຂຶ້ນກັບ.

ມາດຕາ 8 ສິດໄດ້ຮັບການປົກປ້ອງຈາກການໃຊ້ຄວາມຮຸນແຮງ

ໃນສະຖານທີ່ເກັບກຳຂ່າວ ນັກຂ່າວຜູ້ຖືບັດນັກຂ່າວຢ່າງຖືກຕ້ອງ ມີສິດໄດ້ຮັບການປົກປ້ອງ ດ້ວຍເຈົ້າໜ້າທີ່ ຫຼື ອຳນາດການປົກຄອງ ຈາກການໃຊ້ຄວາມຮຸນແຮງທຸກຮູບແບບ ຂອງຜູ້ບໍ່ພໍໃຈຕໍ່ການເຄື່ອນໄຫວຂອງນັກຂ່າວ.

## ໝວດທີ 3
## ການຄັດເລືອກ ແລະ ການພິຈາລະນາ ຜູ້ຖືບັດນັກຂ່າວ

ມາດຕາ 9 ຜູ້ຄັດເລືອກເປົ້າໝາຍຜູ້ຖືບັດນັກຂ່າວ

ຫົວໜ້າອົງການເຈົ້າຂອງສື່ມວນຊົນ, ຫົວໜ້າສະມາຄົມນັກຂ່າວແຫ່ງ ສປປ ລາວ, ຫົວໜ້າອົງການຄຸ້ມຄອງ

ສື່ມວນຊົນ ເປັນຜູ້ຄັດເລືອກເປົ້າໝາຍຜູ້ຈະຖືບັດນັກຂ່າວໃນນາມອົງການຈັດຕັ້ງຂອງຕົນ ຕາມເງື່ອນໄຂທີ່ໄດ້ກຳນົດໄວ້ໃນກົດໝາຍວ່າດ້ວຍສື່ມວນຊົນ (ສະບັບປັບປຸງ) ມາດຕາ 34 ເງື່ອນໄຂນັກຂ່າວ.

**ມາດຕາ 10 ຜູ້ມີສິດພິຈາລະນາຕົກລົງເຫັນດີອອກບັດນັກຂ່າວ**

ລັດຖະມົນຕີ ກະຊວງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ເປັນຜູ້ມີສິດພິຈາລະນາຕົກລົງເຫັນດີອອກບັດນັກຂ່າວ ໂດຍມອບໃຫ້ກົມສື່ມວນຊົນເປັນຜູ້ສັງລວມ ແລະ ກວດສອບເປົ້າໝາຍຜູ້ຖືບັດກ່ອນຈະສົ່ງໃຫ້ລັດຖະມົນຕີອະນຸມັດ.

**ມາດຕາ 11 ວັນ, ເດືອນ, ປີ ພິຈາລະນາ ຕົກລົງເຫັນດີອອກບັດນັກຂ່າວ**

ແຕ່ລະປີ, ລັດຖະມົນຕີ ກະຊວງຖະແຫຼງຂ່າວ, ວັດທະນະທຳ ແລະ ທອ່ງທ່ຽວ ພິຈາລະນາຕົກລົງເຫັນດີອອກບັດນັກຂ່າວສອງເທື່ອຄື: ເທື່ອທີ່ໜຶ່ງແມ່ນໃນວັນທີ່ 1 ມັງກອນ ແລະ ເທື່ອທີ່ສອງ ແມ່ນໃນວັນທີ 25 ມີຖຸນາ.

## ໝວດທີ 4

## ຂັ້ນຕອນການສະເໜີຖື, ການມອບ, ການປ່ຽນ, ການສົ່ງຄືນ ແລະ ການຖອນບັດນັກຂ່າວ.

**ມາດຕາ 12 ຂັ້ນຕອນການສະເໜີຖືບັດນັກຂ່າວ**

ຕາມການຄັດເລືອກຂອງຜູ້ມີສິດຄັດເລືອກເປົ້າໝາຍຖືບັດນັກຂ່າວ ຊຶ່ງໄດ້ກຳນົດໄວ້ໃນມາດຕາ 5 ຂອງຂໍ້ຕົກລົງສະບັບນີ້, ຜູ້ເປັນເປົ້າໝາຍຖືບັດນັກຂ່າວຕອ້ງໄດ້ປະກອບເອກະສານທີ່ກ່ຽວຂອ້ງດັ່ງລຸ່ມນີ້:

1. ໃບສະເໜີຂຽນດ້ວຍຕົນເອງ ພອ້ມຕິດຄັດຮູບ 3x4 ສອງແຜ່ນ.
2. ໃບປະກາດສະນີຍະບັດ (ສຳເນົາ) ໃນສາຂາວິຊາສະເພາະໃດໜຶ່ງ ໃນລະດັບການສຶກສາຊັ້ນກາງຂຶ້ນໄປ ຫຼື ມີໃບຢັ້ງຢືນຄວາມຮູ້ ປະສົບການ ແລະ ພອນສະຫວັນດ້ານສື່ມວນຊົນ.
3. ສົ່ງເອກະສານທີ່ກ່າວມາຂ້າງເທິງນີ້ ໃຫ້ຜູ້ມີສິດຄັດເລືອກເປົ້າໝາຍຖືບັດ.
4. ຜູ້ມີສິດຄັດເລືອກຖືບັດຈະສັງລວມເປົ້າໝາຍຖືບັດຂອງຕົນ ແລະ ໜັງສືສະເໜີຕໍ່ທ່ານ ລັດຖະມົນຕີກະຊວງຖະແຫຼງຂ່າວ, ວັດທະນະທຳ ແລະ ທອ່ງທ່ຽວ ເພື່ອຂໍອະນຸມັດຖືບັດໂດຍຜ່ານກົມສື່ມວນຊົນ. ໜັງສືສະເໜີ ແລະ ເອກະສານທັງໝົດຕ້ອງສົ່ງກ່ອນ 120 ວັນ (ຮອ້ຍຊາວວັນ) ຂອງວັນທີ 1 ພະຈິກ ແລະ ວັນທີ 21 ເມສາ ຂອງແຕ່ລະປີ.
5. ກົມສື່ມວນຊົນ ເມື່ອໄດ້ຮັບໜັງສືສະເໜີ ແລະ ເອກະສານກ່ຽວຂ້ອງ ຈາກຜູ້ມີສິດຄັດເລືອກເປົ້າໝາຍຜູ້ຖືບັດ ຕາມເວລາທີ່ກຳນົດໄວ້ໃນຂໍ້ 4 ຂອງມາດຕາ 12 ຂອງຂໍ້ຕົກລົງສະບັບນີ້ຕອ້ງໄດ້ສັງລວມ ກວດສອບ ເອົາບັນຊີເປົ້າໝາຍຂອງຜູ້ຖືບັດ ແລະ ສົ່ງໃຫ້ລັດຖະມົນຕີພິຈາລະນາອອກອະນຸມັດ.

**ມາດຕາ 13 ການມອບບັດນັກຂ່າວ**

ການມອບບັດນັກຂ່າວທີ່ໄດ້ຮັບອະນຸມັດ ແມ່ນໜ້າທີ່ຂອງອົງການຄຸ້ມຄອງສື່ມວນຊົນທີ່ກ່ຽວຂ້ອງເປັນຜູ້ມອບ ແຈກຢາຍ, ໂດຍກ່ອນມອບແຈກຢາຍຕ້ອງໄດ້ຈັດຕັ້ງເຜີຍແຜ່ກ່ຽວກັບຂໍ້ຕົກລົງສະບັບນີ້, ຈັນຍາບັນນັກຂ່າວ, ກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງກັບການເຄື່ອນໄຫວວຽກງານສື່ມວນຊົນ ໃຫ້ເປົ້າໝາຍຜູ້ຖືບັດໄດ້ຮັບຮູ້.

**ມາດຕາ 14 ອາຍຸຂອງບັດນັກຂ່າວ**

ອາຍຸການຂອງບັດນັກຂ່າວ ມີກຳນົດ 5 (ຫ້າ) ປີ ຊຶ່ງນັບແຕ່ວັນທີ 1 ມັງກອນ ແລະ ວັນທີ 25 ມິຖຸນາ ຂອງປີອະນຸມັດຖືບັດ.

**ມາດຕາ 15 ສະເໜີປ່ຽນບັດນັກຂ່າວ**

ການປ່ຽນບັດນັກຂ່າວມີສາມກໍລະນີ ດັ່ງນີ້:

1. ຜູ້ທີ່ມີບັດນັກຂ່າວ ເມື່ອໄດ້ຍົກຍ້າຍໄປຮັບໜ້າທີ່ເປັນນັກຂ່າວຢູ່ອົງການຈັດຕັ້ງໃໝ່ໃນຂົງເຂດເປົ້າໝາຍໄດ້ຮັບບັດນັກຂ່າວ ຕອ້ງສະເໜີປ່ຽນບັດໃໝ່ ໂດຍຜ່ານການຢັ້ງຢືນເປັນທາງການຈາກການຈັດຕັ້ງໃໝ່ຂອງຕົນ.

2. ບັດເສຍ, ຂາດ, ເປື້ອນເປິະ ແລະ ມີສະພາບອື່ນໆ ທີ່ບໍ່ສາມາດກວດສອບໄດ້ ຜູ້ຖືບັດສະເໜີປ່ຽນບັດໃໝ່ ໂດຍຜ່ານການຢັ້ງຢືນຈາກການຈັ້ດຕັ້ງໃໝ່ຂອງຕົນ.

3. ບັດໝົດອາຍຸ ຜູ້ຖືບັດສະເໜີປ່ຽນບັດໃໝ່ ໂດຍຜ່ານການຢັ້ງຢືນຈາກການຈັດຕັ້ງຂອງຕົນ.

**ມາດຕາ 16 ການສະເໜີຂໍປ່ຽນບັດນັກຂ່າວ**

ຜູ້ຖືບັດນັກຂ່າວ ທີ່ຕົກຢູ່ໃນສາມກໍລະນີທີ່ກຳນົດໄວ້ໃນມາດຕາ 15 ຂອງຂໍ້ຕົກລົງສະບັບນີ້ຕ້ອງປະກອບເອກະ ສານສະເໜີຂໍປ່ຽນບັດນັກຂ່າວນຳກົມສື່ມວນຊົນ ກະຊວງຖະແຫຼງຂ່າວ, ວັດທະນະທຳ ແລະ ທອ່ງທ່ຽວ ຊຶ່ງເອກະສານທີ່ຕອ້ງປະກອບມີດັ່ງລຸ່ມນີ້:

1. ໜັງສືສະເໜີຂໍປ່ຽນບັດນັກຂ່າວຈາກການຈັດຕັ້ງຂອງຕົນ ຫຼື ຈາກການຈັດຕັ້ງໃໝ່ ທີ່ຜູ້ສະເໜີຍ້າຍໄປສັງກັດ.

2. ໜັງສືຢັ້ງຢືນບອ່ນເຮັດວຽກໃໝ່ຈາກອົງການຈັດຕັ້ງໃໝ່ ຂອງຜູ້ຖືບັດນັກຂ່າວຖ້າໄດ້ຍົກຍ້າຍ.

3. ໜັງສືແຈ້ງບັດເສຍຈາກການຈັດຕັ້ງທີ່ຜູ້ຖືບັດສັງກັດຢູ່, ຖ້າບັດເສຍ.

4. ກົມສື່ມວນຊົນ ກະຊວງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ເມື່ອໄດ້ຮັບເອກະສານສະເໜີຂໍປ່ຽນບັດຈະພິຈາລະນາ ແລະ ອະນຸມັດປ່ຽນບັດນັກຂ່າວໃຫ້ໃນໄລຍະເວລາ 30 (ສາມສິບ) ວັນ.

**ມາດຕາ 17 ການສົ່ງຄືນບັດນັກຂ່າວ**

ຜູ້ຖືບັດນັກຂ່າວໄດ້ຍົກຍ້າຍໄປເຮັດໜ້າທີ່ຢູ່ຂະແໜງການອື່ນໆທີ່ບໍ່ກ່ຽວຂ້ອງກັບວຽກງານສື່ມວນຊົນ ແລະ ບໍ່ໄດ້ຖືກມອບໝາຍຈາກການຈັດຕັ້ງໃໝ່ຂອງຕົນໃຫ້ເຄື່ອນໄຫວວຽກດັ່ງກ່າວ ຕອ້ງສົ່ງບັດໃຫ້ກະຊວງຖະແຫຼງຂ່າວ, ວັດ ທະນະທຳ ແລະ ທ່ອງທ່ຽວ.

**ມາດຕາ 18 ການຖອນບັດນັກຂ່າວ**

ຜູ້ຖືບັດນັກຂ່າວຈະຖືກຖອນບັດນັກຂ່າວໃນກໍລະນີເກີດຂຶ້ນດັ່ງນີ້:

- ເຮັດວຽກໃນອົງການສື່ມວນຊົນ ທີ່ຖືກຖອນໃບອະນຸຍາດເຄື່ອນໄຫວສື່ມວນຊົນ.
- ລະເມີດຈັນຍາບັນນັກຂ່າວ ຫຼື ສວຍໃຊ້ບັດໃນທາງຜິດກົດໝາຍ.
- ຖືກລົງວິໃນຂັ້ນໂຈະວຽກ, ຖືກກ່າວຟ້ອງ ຫຼື ຖືກສານຕັດສິນລົງໂທດ.
- ຢຸດວຽກ.

ພາຍໃນເວລາ 15 (ສິບຫ້າ) ວັນ ທີ່ມີຄຳສັ່ງຖອນບັດ, ຫົວໜ້າອົງການສື່ມວນຊົນ ຕ້ອງແຈ້ງໃຫ້ຜູ້ຖືບັດນັກຂ່າວຊາບເປັນລາຍລັກອັກສອນເພື່ອສົ່ງບັດຄືນໃຫ້ກະຊວງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ.

ມາດຕາ 19 ຄ່າລົງທະບຽນ ແລະ ຄ່າບໍລິການເຮັດບັດ

ຜູ້ເຮັດບັດໃໝ່ຕ້ອງເສຍຄ່າລົງທະບຽນຕາມລັດຖະດຳລັດ ຂອງປະທານປະເທດ ແລະ ເສຍຄ່າບໍລິການເຮັດບັດ 50,000 (ຫ້າສິບພັນ) ກີບ.

ມາດຕາ 20 ຂໍ້ຫ້າມສຳລັບຜູ້ຖືບັດນັກຂ່າວ

1. ຫ້າມນຳໃຊ້ບັດນັກຂ່າວເຂົ້າໃນຈຸດປະສົງອື່ນ ນອກຈາກຮັບໃຊ້ໜ້າທີ່ວຽກງານຂອງນັກຂ່າວເທົ່ານັ້ນ.
2. ບັດນັກຂ່າວນີ້ໃຊ້ສະເພາະຜູ້ທີ່ເປັນເຈົ້າຂອງເທົ່ານັ້ນ ຫ້າມເອົາໃຫ້ຜູ້ອື່ນໄປນຳໃຊ້ຢ່າງເດັດຂາດ.

## ໝວດທີ 5
## ການຈັດຕັ້ງປະຕິບັດ

ມາດຕາ 21 ຜົນສັກສິດ

1. ຂໍ້ຕົກລົງສະບັບນີ້ມີຜົນສັກສິດນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ.

ລັດຖະມົນຕີ

ສຈ.ປອ. ກິແກ້ວ ໄຂຄຳພິທູນ